# ເກີດມາເພື່ອຈະມີຊີວິດຕະຫລອດໄປເປັນນິດ

## ຄວາມລັບແຫ່ງຊີວິດນິລັນ

ແຮຣີ ອໍຄາດ (Harry Orchard) ໄດ້ຖືກຕັ້ງສາຍຍາວ່າ "ນັກຂ້າມືລະເບີດ" ລາວໄດ້ຂ້າຄົນ 21 ຄົນ. ຄັ້ງໜຶ່ງລາວໄດ້ຂ້າຄົນງານເໝືອງແຮ່ 14 ຄົນ ໂດຍການວາງລະເບີດລົດໄຟໃນຂະນະທີ່ພວກເຂົາຂື້ນລົດໄຟກັບບ້ານຫລັງຈາກເລີກງານຕອນກາງຄືນ. ລາວເປັນ "ມືປືນຮັບຈ້າງ" ລາວພ້ອມທີ່ຈະຂ້າຄົນ ຢູ່ໃສກໍໄດ້ ຂໍພຽງແຕ່ລາວໄດ້ຄ່າຈ້າງ. ນັກສໍ້ໂກງແລະເຈົ້ານາຍໃຫຍ່ຄົນໃດທີ່ມີປັນຫາ ຫລືມີຄົນຂັດຂວາງທາງທຸລະກິດຂອງເຂົາ ເຂົາກໍຈະມາຫາແຮຣີ ອໍຄາດໃຫ້ໄປເອົາຜູ້ຂັດຂວາງອອກ.

ເລື່ອງທີ່ຕົກເປັນຂ່າວດັງທີ່ສຸດນັ້ນກໍຄືການຄາດຕະກຳອະດີດຜູ້ວ່າລາດຊະການລັດໄອດາໂຮ (Idaho) ຄືທ່ານ ແຟຣງຄ໌ ສຕູເນນເບີກ (Frank Stuenenberg), ຄືນໜຶ່ງໃນຂະນະທີ່ ແຮຣີ ອໍຄາດ ກຳລັງຫລິ້ນໄພ້ຢູ່ທີ່ໂຮງແຮມຊາຣາໂກຕາ ລາວໄດ້ເຫັນ ແຟຣງຄ໌ ສຕູເນນເບີກ ກຳລັງຍ່າງ ຕົກທີ່ອອກໄປເພື່ອໄປຢ້ຽມຢາມໝູ່ເພື່ອນລັດຖະສະພາຂອງລາວ, ແຮຣີ ອໍຄາດ ກໍຟ້າວແລ່ນຂຶ້ນໄປຫ້ອງໄປເອົາລະເບີດຫໍ່ໃສ່ໜັງສືພິມແລ້ວກໍແລ່ນອອກໄປທາງນອກ. ລາວໄດ້ເອົາລະເບີດໄປວາງທີ່ປະຕູໜ້າບ້ານຂອງ ແຟຣງຄ໌ ສຕູເນນເບີກ ແລ້ວລາວກໍລີ້ຢູ່ບ່ອນມືດໆ. ບໍ່ດົນຫລັງຈານນັ້ນລະເບີດກໍໄດ້ແຕກ. ເລືອດຂອງ ແຟຣງຄ໌ ສຕູເນນເບີກ ໄດ້ກະຈາຍໄປທົ່ວ ພັນລະຍາແລະລູກຂອງລາວກໍຕົກໃຈແລະຟ້າວແລ່ນມາຫາຮ່າງທີ່ນອນຕາຍ. ແຟຣງຄ໌ ສຕູເນນເບີກ ຜູ້ເປັນທີ່ຮັກຂອງທຸກຄົນໄດ້ຖືກລອບສັງຫານ!

ແຮຣີ ອໍຄາດໄດ້ຖືກຈັບ ແລະລາວກໍຍອມຮັບວ່າລາວເປັນຜູ້ລອບຂ້າ. ສານໄດ້ຕັດສິນປະຫານຊີວິດລາວລຳລັບການກະທຳອັນໂຫດຫ້ຽມນີ້. ຖ້າເປັນຄົນທົ່ວໄປທີ່ເຫັນສາມີຂອງຕົນຖືກຂ້າ ພວກເຂົາກໍຄົງຊັງຄົນທີ່ຂ້ານັ້ນ ແຕ່ພັນລະຍາຂອງ ແຟຣງຄ໌ ສຕູເນນເບີກ ບໍ່ມີຄວາມກຽດຊັງໃດໆຕໍ່ ແຮຣີ ອໍຄາດ ລາວເປັນຄຣິດສຕຽນ! ລາວໄດ້ຂຽນຈົດໝາຍແລ້ວເອົາໃສ່ໃນກ່ອງພ້ອມທັງໜັງສື ບາດກ້າວສູ່ພະຄຣິດ (Step to Christ) ໄປຫາ ແຮຣີ ອໍຄາດ ເພື່ອສະແດງໃຫ້ເຫັນເຖິງການໃຫ້ອະໄພ. ທະຫານຍາມໄດ້ເຂົ້າໄປຫາ ແຮຣີ ອໍຄາດ ພ້ອມທັງບອກວ່າ "ພັນລະຍາຂອງຄົນທີ່ເຈົ້າໄດ້ຂ້າສົ່ງກ່ອງນີ້ມາໃຫ້ເຈົ້າ." ແຮຣີ ອໍຄາດ ບໍ່ກ້າເປີດກ່ອງນັ້ນ ເພາະລາວຢ້ານວ່າມັນຈະເປັນລະເບີດທີ່ພັນລະຍາຂອງ ແຟຣງຄ໌ ສຕູເນນເບີກ ສົ່ງມາແກ້ແຄ້ນ. ໃນທີ່ສຸດລາວກໍຕັດສິນໃຈເປີດເບິ່ງແລະລາວກໍເຫັນໜັງສື "ບາດກ້າວສູ່ພະຄຣິດ" ແລ້ວລາວກໍດຶກໜັງສືນັ້ນຖິ້ມພ້ອມທັງປ້ອຍທັງດ່າ. ບໍ່ມີໃຜເຄີຍເລົ່າເລື່ອງພະຄຣິດໃຫ້ລາວຟັງຈັກເທື່ອ.

ການໃຫ້ອະໄພຂອງທ່ານນາງ ສຕູເນນເບີກ ຊ່າງຍິ່ງໃຫຍ່ຫລາຍ ລາວໃຫ້ອະໄພແມ້ກະທັ້ງຄາດຕະກອນທີ່ສັງຫານສາມີຕົນເອງ. ພໍ ແຮຣີ ອໍຄາດ ຄິດເຖິງການໃຫ້ອະຂອງທ່ານນາງ ສຕູເນນເບີກ ລາວກໍເລີ່ມຈັບໜັງສືນັ້ນຂຶ້ນມາອ່ານ. ໜັງສືນັ້ນແມ່ນຂ່າວສານແຫ່ງຄວາມຮັກແລະການໃຫ້ອະໄພຂອງພະເຈົ້າ. ເມື່ອອ່ານແລ້ວຫົວໃຈອັນແຂງກະດ້າງຂອງຊາຍນັກຂ້າຄົນນີ້ກໍເຕັມໄປດ້ວຍຄວາມອົບອຸ່ນ. ບໍ່ດົນຫລັງຈາກນັ້ນໄດ້ມີຜູ້ຊາຍຄົນໜຶ່ງສົ່ງພະຄຳພີມາໃຫ້ລາວ ແລະລາວກໍເລີ່ມອ່ານພະຄຳພີ. ໃນຂະນະທີ່ ແຮຣີ ອໍຄາດ ອ່ານພະຄຳພີແລະໄດ້ຄິດເຖິງການໃຫ້ອະໄພຂອງທ່ານນາງ ສຕູເນນເບີກ ຈິດໃຈອັນແຂງກະດ້າງຂອງລາວກໍປ່ຽນເປັນຈິດໃຈທີ່ອ່ອນສຸພາບ. ແຮຣີ ອໍຄາດ ເຄີຍກຽດຊັງພະຄຳພີຫລາຍ ແຕ່ພໍເມື່ອລາວໄດ້ອ່ານມັນແລ້ວ ລາວໄດ້ຄົ້ນພົບຂາວດີອັນຍິ່ງໃຫຍ່. ລາວໄດ້ຄົ້ນເຖິງຄວາມຫວັງແລະການໃຫ້ອະໄພທີ່ມີໃຫ້ຄົນບາບທຸກຄົນໃນໂລກ!
ພະຄຳໂຣມ 6:23 ໄດ້ດຶງດູດຄວາມສົນໃຈຂອງລາວ

(ໂຣມ 6:23) "ດ້ວຍວ່າຄ່າຈ້າງຂອງຄວາມຜິດບາບກໍຄືຄວາມຕາຍ ແຕ່ຂອງພຣະຣາຊທານອັນໂຜດມາແຕ່ພຣະເຈົ້າ ກໍຄືຊີວິດອັນຕລອດໄປເປັນນິດໃນພຣະຄຣິດ ຄືພຣະເຢຊູເຈົ້າຂອງພວກເຮົາ"

ລາວຮູ້ວ່າລາວຄວນໄດ້ຮັບຄວາມຕາຍ ແຕ່ວ່າລາວໄດ້ຮຽນຮູ້ວ່າພະເຈົ້າຢາກໃຫ້ລາວມີຊີວິດນິລັນເຖິງແມ້ວ່າລາວຈະເປັນຄົນບາບປານໃດກໍຕາມ. ແຮຣີ ອໍຄາດ ຜູ້ມີໂທດເຖິງຕາຍໄດ້ຄົ້ນພົບວ່າ: ທຸກຄົນໃນໂລກນີ້ກໍມີໂທດເຖິງຕາຍເຊັ່ນກັນ. (ໂຣມ 3:23) ພະຄຳພີໄດ້ກ່າວວ່າ "ດ້ວຍວ່າທຸກຄົນໄດ້ເຮັດຜິດບາບ ແລະຂາດຈາກພຣະຣັສມີຂອງພຣະເຈົ້າ"

(ໂຣມ 3:10-12) "ບໍ່ມີຄົນຊອບທັມຈັກຄົນນຶ່ງຄົນດຽວ ບໍ່ມີຄົນທີ່ເຂົ້າໃຈ ບໍ່ມີຄົນທີ່ສແວງຫາພຣະເຈົ້າ ທຸກຄົນໄດ້ຫລົງເຈັ້ນໄປ ເຂົາພາກັນເປັນຄົນຊົ່ວໄປຫມົດ ຜູ້ເຮັດການດີບໍ່ມີຈັກຄົນ"

(ໂຣມ 6:23) ນີ້ບໍ່ແມ່ນຂ່າວດີເລີຍມັນແມ່ນຂ່າງວຮ້າຍຫລາຍ "ດ້ວຍວ່າຄ່າຈ້າງຂອງຄວາມຜິດບາບກໍຄືຄວາມຕາຍ"

ແຮຣີ ອໍຄາດ ຮູ້ດີວ່າລາວຈະຕ້ອງຕາຍເພາະວ່າລາວເປັນອາດຊະຍາກອນ. ແຕ່ວ່າມັນກໍແມ່ນເລື່ອງທີ່ໜ້າຢ້ານຫລາຍທີ່ຕ້ອງກ້າວສູ່ນິລັນການພ້ອມກັບການພິພາກສາລົງໂທດທີ່ລໍຖ້າລາວຢູ່ຂ້າງໜ້າ. ສິ່ງນີ້ອາດເຮັດໃຫ້ຄົນໃດຄົນໜຶ່ງເປັນຄົນສິ້ນຫວັງໄປເລີຍກໍໄດ້!

(ໂຣມ 6:23) ເມື່ອລາວໄດ້ອ່ານຂໍ້ຄວາມນີ້ "ແຕ່ຂອງພຣະຣາຊທານອັນໂຜດມາແຕ່ພຣະເຈົ້າ ກໍຄື ຊີວິດອັນຕລອດໄປເປັນນິດໃນພຣະຄຣິດ ຄືພຣະເຢຊູເຈົ້າຂອງພວກເຮົາ" ລາວກໍເລີ່ມມີຄວາມ ຫວັງ. ລາວຍິ່ງອ່ານພະຄຳພີຫລາຍເທົ່າໃດ ມັນຍິ່ງເຮັດໃຫ້ລາວຮູ້ສຶກດີຂຶ້ນເທົ່ານັ້ນ.

(ເອເຟໂຊ 2:8,9) "ດ້ວຍວ່າຊຶ່ງທ່ານທັງຫລາຍໄດ້ຖືກຊົງໂຜດໃຫ້ພົ້ນນັ້ນ ກໍຍ້ອນພຣະຄຸນດ້ວຍ ທາງຄວາມເຊື່ອ ສິ່ງເຫລົ່ານີ້ບໍ່ໃຊ່ພວກທ່ານເຮັດເອົາເອງ ແຕ່ພຣະເຈົ້າຊົງປະທານໃຫ້ ຄວາມພົ້ນ ນັ້ນບໍ່ໃຊ່ມີມາຍ້ອນການປະຕິບັດ ເພື່ອບໍ່ໃຫ້ຄົນນຶ່ງຄົນໃດອວດໄດ້" ຂ່າວຮ້າຍໄດ້ກາຍມາເປັນຂ່າວ ດີ!

ການທີ່ຄົນໆໜຶ່ງຈະຫັນເຂົ້າຫາພະເຢຊູບໍ່ແມ່ນເລື່ອງງ່າຍເລີຍ. ແຮຣີ ອໍຄາດ ເປັນທຸກໃຈເພາະ ລາວຄິດວ່າລາວໄດ້ເຮັດຜິດຫລາຍເກີນກວ່າຈະໄດ້ຮັບການໃຫ້ອະໄພ. ລາວຄິດວ່າ "ຂ້ອຍນີ້ຊ່າງ ແມ່ນບາບໜາເກີນກວ່າທີ່ພະເຈົ້າຈະອະໄພໃຫ້" ລາວຢ້ານວ່າລາວບໍ່ມີຫວັງຫຍັງແລ້ວ ແລະລາວກໍ ເກືອບຈະລືມຄິດເຖິງເລື່ອງການໃຫ້ອະໄພໄປເລີຍ. ແຕ່ກໍມີບາງສິ່ງເຮັດໃຫ້ລາວບໍ່ທໍ້ແລະສືບຕໍ່ອ່ານ ກ່ຽວກັບຄວາມຮັກອັນຍິ່ງຂອງພະເຈົ້າຕໍ່ໄປ. ລາວຊ່າງມີຄວາມຊື່ນໃຈເຫລືອເກີນທີ່ໄດ້ຮູ້ວ່າພະເຢຊູ ໄດ້ຮັບເອົາໂທດຄວາມຜິດບາດຂອງລາວແລະຂອງທຸກຄົນ.

ຢາກໃຫ້ພີ່ນ້ອງລອງຄິດເບິ່ງວ່າ ແຮຣີ ອໍຄາດ ໄດ້ມີຄວາມຍິນດີປານໃດເມື່ອງທ່ານນາງ ສຕູເນນ ເບີກ ໄດ້ໄປຢ້ຽມລາວໃນຄຸກ ແລະບອກໃຫ້ ແຮຣີ ອໍຄາດ ວ່າລາວໃຫ້ອະໄພ ແລະຂໍໃຫ້ ແຮຣີ ອໍ ຄາດ ມອບຫົວໃຈໃຫ້ກັບພະຄຣິດ. ບໍ່ໜ້າເຊື່ອ, ຄອບຄົວທີ່ຫົວໃຈແຕກສະຫລາຍສູນເສຍພໍ່ສູນເສຍ ຫົວໜ້າຄອບຄົວ ແຕ່ຍັງມີຄວາມຮັກມີຄວາມໃຫ້ອະໄພແກ່ຄາດຕະເລືອດເຢັນນັ້ນ!

ແຮຣີ ອໍຄາດ ໄດ້ຕັດສິນໃຈວ່າລາວຈະມອບຈິດມອບໃຈຂອງລາວໃຫ້ກັບພະເຈົ້າແລະຂໍໃຫ້ພະອົງ ອະໄພແລະປະທານຊີວິດນິລັນໃຫ້. ດ້ວຍຄວາມເຊື່ອສັດທາ ລາວໄດ້ຮັບເອົາພະຄຣິດໃຫ້ພະເປັນຜູ້ ຊ່ອຍໃຫ້ລອດຂອງລາວ. ການກັບໃຈຂອງ ແຮຣີ ອໍຄາດ ແມ່ນເລື່ອງຍິ່ງໃຫຍ່ແລະເລີກຊຶ້ງຫລາຍ.

ລາວໄດ້ຮັບສິນບັບຕິສະມາ ແລະໄປນະມັດສະການຮ່ວມກັບພີ່ນ້ອງໂບດຂອງທ່ານນາງ ສຕູເນນ ເບີກ. ເພາະວ່າລາວສາລະພາບແລະຍອມຮັບຜິດ ໂທດປະຫານຊີວິດຂອງລາວໄດ້ລົດລົງມາເປັນ ໂທດຈຳຄຸກຕະຫລອດຊີວິດ. ລາວໄດ້ເປັນພະຍານທີ່ເຂັ້ມແຂງ ຄວາມເຊື່ອຂອງຂອງລາວໄດ້ນຳ ເອົາຄົນຫລາຍຄົນມາເຊື່ອແລະຍອມຮັບເອົາພະເຢຊູເປັນພະຜູ້ຊ່ອຍໃຫ້ລອດ. ຫລາຍຄົນທີ່ຖືກຕັດ- ສິນປະຫານຊີວິດປະຕິເສດບໍ່ໃຫ້ສາດສະໜາຈານມາຢ້ຽມ ແຕ່ຊ້ຳພັດຂໍໃຫ້ ແຮຣີ ອໍຄາດ ມາອະທິ-

ຖານເພື່ອ. ຫລັງຈາກທີ່ຖືກຂັງເປັນເວລາຫລາຍກວ່າ 50 ປີລາວໄດ້ເວົ້າວ່າ, "ເຫລັກແລະກຳແພງຂັງຂ້ອຍໄດ້ແຕ່ຮ່າງກາຍ ແຕ່ໃຈຂອງຂ້ອຍເປັນອິດສະຫລະຕັ້ງແຕ່ດົນແລ້ວ!"

ພີ່ນ້ອງທີ່ຮັກ, ເຮົາທຸກຄົນເປັນຄົນບາບ. ບາງຄົນອາດເວົ້າວ່າ "ພວກເຮົາເຮັດບາບພຽງແຕ່ 3 ເທື່ອຕໍ່ມື້ເທົ່ານັ້ນ, ພວກເຮົາເຮັດຜິດ 1,095 ເທື່ອຕໍ່ປີ. ຖ້າເຮົາຄູນອາຍຸຂອງເຮົາໃສ່ໂຕເລກນີ້ ເຮົາຄົງຈະຕົກໃຈ!" ມື້ໜຶ່ງເຮົາເຮັດບາບຈັກເທື່ອມັນບໍ່ມີຄວາມສຳຄັນປານໃດ ແຕ່ອັນທີ່ສຳຄັນກໍຄືການທີ່ເຮົາຮູ້ໂຕເຮົາວ່າເຮົາໄດ້ເຮັດບາບ ເພາະເຮົາຈະໄດ້ສາມາດຊອກຫາຄວາມຊ່ອຍເຫລືອໄດ້. ຖ້າຜູ້ໃດຜູ້ໜຶ່ງປ່ວຍຂັ້ນສຸດທ້າຍແລ້ວບໍ່ເຄີຍຮູ້ໂຕເລີຍວ່າຕົນເອງຢູ່ໃນຂັ້ນສຸດທ້າຍແລະກໍບໍ່ເຄີຍໄປຮັບການປິ່ນປົວ ແນ່ນອນຜູ້ນັ້ນຈະຕ້ອງຕາຍ. ຊະຕາກຳຂອງຄົນບາບກໍຄົງເປັນເຊັ່ນນັ້ນຖ້າເຂົາບໍ່ຮູ້ສະພາບຂອງຈິດໃຈຂອງເຂົາແລະບໍ່ຊອກຫາຄວາມຊ່ອຍເຫລືອ.

ຄວາມບາບແມ່ນຮ້າຍແຮງກວ່າເຮົາຄິດ. ພະຄຳພີໄດ້ກ່າວວ່າ (ເອຊາຢາ 59:2) "ແຕ່ວ່າຄວາມບາບຊົ່ວຂອງເຈົ້າທັງຫລາຍໄດ້ກະທຳໃຫ້ເກີດການແຍກລະຫວ່າງເຈົ້າກັບພຣະເຈົ້າຂອງເຈົ້າ"

ພະເຈົ້າຄືທີ່ມາຂອງຊີວິດ, ເມື່ອອາດາມແລະເອວາເຮັດບາບພວກເຂົາໄດ້ເລີ່ມຕາຍ.
ບໍ່ແມ່ນພຽງແຕ່ອາດາມແລະເອວາເທົ່ານັ້ນ ພວກເຮົາກໍເໝືອນກັນພວກເຮົາລ້ວນແຕ່ຖືກໂທດຕາຍ.
ແຕ່ວ່າພະເຈົ້າແຫ່ງຄວາມຮັກບໍ່ໄດ້ບອກໃຫ້ຜົນຂອງຄວາມບາບໂດຍທີ່ບໍ່ໄດ້ໃຫ້ຄວາມຫວັງ!
ນີ້ຄືຂ່າວດີ! ຈື່ໄດ້ບໍ່ວ່າ ແຮຣີ ອໍຄາດ ໄດ້ພົບຫຍັງ?

(ໂຣມ 6:23) "ດ້ວຍວ່າຄ່າຈ້າງຂອງຄວາມຜິດບາບກໍຄືຄວາມຕາຍ ແຕ່ຂອງພຣະຣາຊທານອັນໂຜດມາແຕ່ພຣະເຈົ້າ ກໍຄືຊີວິດອັນຕລອດໄປເປັນນິດໃນພຣະຄຣິດ ຄືພຣະເຢຊູເຈົ້າຂອງພວກເຮົາ"

ຄວາມລອດແມ່ນຂອງປະທານທີ່ພວກເຮົາບໍ່ຄວນໄດ້ຮັບ ພວກເຮົາບໍ່ສາມາດຮຽນຮູ້ໄດ້ ພວກເຮົາບໍ່ສາມາດຊື້ໄດ້ ພວກເຮົາບໍ່ສາມາດຜູກມັດພະເຈົ້າໃຫ້ພະເຈົ້າປະທານຄວາມລອດໃຫ້ເຮົາໂດຍການເຮັດດີຕ່າງໆ.

ເກືອບທຸກໆສາດສະໜາສອນວ່າເຮົາສາມາດໄດ້ຮັບການໃຫ້ອະໄພແລະຊີວິດນິລັນໂດຍການເຮັດດີ. ຢູ່ປະເທດອິນເດຍ, ໄດ້ມີຊາຍຫລາຍຄົນປ່ອຍໜວດປ່ອຍເຄົາໃສ່ຜ້າຂາວມ້າຂາດໆເຂີນໆແລ້ວກໍນັ່ງເທິງບ່ອນນັ່ງທີ່ເປັນໜາມ ພວກເຂົາເຊື່ອວ່າໂດຍການທໍລະມານໂຕເອງພວກເຂົາສາມາດເຮັດໃຫ້ພະເຈົ້າພໍພະໄທ. ພວກເຂົາຂ້ຽນຕີໂຕເອງ,ລ່າມໂສ້ໂຕເອງ ບາງຄົນກໍຍ່າງຕີນເປົ່າເທິງຖ່ານໄຟ

ຮ້ອນ. ບາງຄົນກໍໃຊ້ເຫລັກແຫລມແທງເຂົ້າໄປທີ່ໜັງໂຕເອງ ພວກເຂົາມີການກະທຳອັນຜິດປົກກະ-ຕິ, ທາລຸນຮ່າງກາຍຂອງເຂົາເອງ ນີ້ກໍເພື່ອທີ່ພວກເຂົາໄດ້ຈະໄດ້ເຮັດໃຫ້ພະເຈົ້າຂອງພວກເຂົາພໍພະໄທ.

ຊາວພຸດເຊື່ອວ່າການທີ່ພວກເຂົາສ້າງເຈດີແລະໃຫ້ທານອາຫານແກ່ວິນຍານຂອງຜູ້ທີ່ລ່ວງລັບໄປແລ້ວເຮັດໃຫ້ພວກເຂົາໄດ້ບຸນໃນຊາດໜ້າ.

ຊາວມຸດສະລິມເຊື່ອວ່າບໍ່ມີຄວາມສຸກໃດ ຫລືບໍ່ມີຫົນທາງໃດທີ່ຈະເຮັດໃຫ້ພະເຈົ້າພໍພະໄທໄປກວ່າການເດີນທາງສະແຫວງບຸນໄປກຸງເມກກະ ຫລືຕາຍເພື່ອສາສາດໜາມຸດສະລິມ.

ຊ່າງເປັນການກະທຳທີ່ແປກແທ້ໆ! ໂດຍບໍ່ຮູ້ໂຕຄຣິສຕຽນຫລາຍຄົນກໍເປັນໃນທຳນອງນີ້ເຊັ່ນກັນ. ພວກເຂົາໄປໂບດ, ໃຫ້ເງິນຖະຫວາຍ ບໍ່ໄປທຳຮ້າຍຜູ້ອື່ນ ພວກເຂົາຄິດວ່າການກະທຳເຫລົ່ານີ້ເຮັດໃຫ້ພະເຈົ້າພໍພະໄທແລະພວກເຂົາກໍຄວນໄດ້ຮັບຊີວິດນິລັນ. ອັນນີ້ກໍເປັນໄປໄດ້ບໍ່? ໂດຍການທຳ-ຮ້າຍຮ່າງກາຍ ທຳຮ້າຍຈິດໃຈໂຕເອງ ຫລືແມ້ກະທັ້ງເຮັດດີຕ່າງໆ ສາມາດເຮັດໃຫ້ພະເຈົ້າອະໄພເຂົາແລະປະທານຊີວິດນິລັນໃຫ້ເຂົາແທ້ບໍ່? ການທີ່ພວກເຮົາໄດ້ຮັບຄວາມລອດເປັນຄືດັ່ງການທີ່ນັກກິລາໄດ້ຮັບຫລຽນຄຳໂອລິມປິກບໍ່?

ພະຄຳພີໄດ້ກ່າວວ່າ, (ເອເຟໂຊ 2:8-9) “ດ້ວຍວ່າຊຶ່ງທ່ານທັງຫລາຍໄດ້ຖືກຊົງໂຜດໃຫ້ພົ້ນນັ້ນ ກໍຍ້ອນພຣະຄຸນດ້ວຍທາງຄວາມເຊື່ອ ສິ່ງເຫລົ່ານີ້ບໍ່ໃຊ່ພວກທ່ານເຮັດເອົາເອງ ແຕ່ພຣະເຈົ້າຊົງປະ-ທານໃຫ້ ຄວາມພົ້ນນັ້ນບໍ່ໃຊ່ມີມາຍ້ອນການປະຕິບັດ ເພື່ອບໍ່ໃຫ້ຄົນນຶ່ງຄົນໃດອວດໄດ້.”

ການກະທຳຕ່າງໆທີ່ພວກເຮົາເຮັດບໍ່ສາມາດຊ່ອຍໂຕເຮົາໄດ້ ພວກເຮົາຕ້ອງຝາກທຸກສິ່ງທຸກຢ່າງໄວ້ກັບພະຄຸນແລະຄວາມຮັກຂອງພະເຈົ້າ ທີ່ພະອົງໃຫ້ມາຟຣີໆ. ຄວາມລອດເປັນຂອງປະທານຈາກພະເຈົ້າ ຖ້າເຮົາສາມາດໄດ້ຮັບຄວາມລອດດ້ວຍໂຕເຮົາເອງກໍເທົ່າກັບວ່າຄວາມລອດບໍ່ແມ່ນຂອງປະ-ທານ.

ສົມມຸດວ່າຫົວໜ້າງານຂອງພີ່ນ້ອງຍື່ນຊອງຈົດໝາຍໃຫ້ພີ່ນ້ອງແລະບອກວ່ານີ້ແມ່ນຂອງຂວັນ. ແລະພໍພີ່ນ້ອງເປີດເບິ່ງພີ່ນ້ອງກໍເຫັນວ່າໃນຊອງຈົດໝອງນັ້ນແມ່ນເຊັກເງິນເດືອນ, ແລ້ວນີ້ຂອງ-ຂວັນແທ້ບໍ?

ເປັນຫຍັງພະເຈົ້າຜູ້ຍິ່ງຜູ້ຄອບຄອງຈັກກະວານເປັນຫ່ວງເປັນໄຍໂລກນ້ອຍໆໜ່ວຍນີ້? ເປັນຫຍັງພະອົງບໍ່ປ່ອຍໃຫ້ມະນຸດທົ່ວດີ້ທົ່ວແຂງໄດ້ຮັບຄວາມທໍລະມານຈາກການກະທຳບາບຂອງເຂົາ? ພະຄຳພີມີຄຳຕອບ: ຄຳຕອບທີ່ພົບໃນພະຄຳພີກໍຄື (1 ໂຢຮັນ 4:8) "ພະເຈົ້າຊົງເປັນຄວາມຮັກ."

ມະນຸດໄດ້ປ່ວຍໄປດ້ວຍໂລກພະຍາດແຫ່ງຄວາມບາບ ແຕ່ພະເຈົ້າກໍຍັງຮັກມະນຸດ. ຢາກໃຫ້ເຮົາມາຟັງເລື່ອງຕໍ່ໄປນີ້ນຳກັນ

ສອງສາມີພັນຍາຄູ່ໜຶ່ງເຂົາດີໃຈຫລາຍທີ່ເຂົາຫາກໍໄດ້ລູກ. ອອກຈາກໂຮງໝໍໄດ້ບໍ່ເທົ່າໃດມື້ ລູກກໍເລີ່ມໄຂ້ ໄຂ້ທັງເວັນແລະຄືນເພາະວ່າລູກນ້ອຍນັ້ນມີອາການແພ້ນທ້ອງ. ພໍ່ແມ່ກໍເຮັດຕາມຄຳແນະ-ນຳຂອງໝໍທຸກຢ່າງ ແຕ່ວ່າລູກນ້ອຍກໍຍັງໄຂ້ຄືເກົ່າ. ພວກເຂົາອູ້ມລູກຍ່າງອ້ອມໃນເຮືອນ, ຮ້ອງ-ເພງໃຫ້ລູກນ້ອຍຟັງ ເຮັດຕາມຄຳແນະນຳຕ່າງໆທີ່ໝໍແລະໝູ່ໃຫ້ ແຕ່ວ່າລູກນ້ອຍກໍຍັງບໍ່ຢຸດໄຂ້. ພວກເຂົາເມື່ອຍລ້າຫລາຍ ແຕ່ເຖິງແນວໃດພວກເຂົາກໍບໍ່ໄດ້ປະໃຫ້ລູກນ້ອຍຮ້ອງໄຫ້ເປັນທຸກທໍລະ-ມານຢູ່ຄົນດຽວ! ຮູ້ບໍ່ເປັນຫຍັງ? ພວກເຂົາຮັກລູກນ້ອຍນັ້ນ ລູກນ້ອຍຍິ່ງເຈັບແລະຮ້ອງໄຫ້ຫລາຍປານໃດ ພວກເຂົາຍິ່ງເປັນຫ່ວງລູກການ້ອຍນັ້ນຫລາຍເທົ່ານັ້ນ

ພະເຈົ້າກໍຊົງເປັນຢ່າງນີ້ເໝືອນກັນ. ລູກຂອງພະເຈົ້າໃນນີ້ກໍເຕັມໄປດ້ວຍພະຍາດແຫ່ງຄວາມບາບ. ຄວາມເຈັບປວດທໍລະມານທີ່ພວກເຂົາໄດ້ຮັບຍ້ອນບາບຂອງເຂົາເອງຍິ່ງມີຫລາຍເທົ່າໃດຍິ່ງເຮັດໃຫ້ພະເຈົ້າຮັກເຂົາຫລາຍຂຶ້ນ.ພະເຈົ້າບໍ່ເຄີຍຄິດທີ່ຈະປະຖິ້ມພວກເຮົາ. ພະເຈົ້າບໍ່ເຄີຍຄິດທີ່ຈະປ່ອຍໃຫ້ເຮົາພິນາດແລະໄດ້ຮັບຄວາມທໍລະມານຈາກຜົນຂອງການບໍ່ເຊື່ອຟັງພະອົງກ

ພະຄຳພີໄດ້ກ່າວວ່າ, ( 2 ເປໂຕ 3:9) "ແຕ່ພຣະອົງຊົງອົດກັ້ນພຣະທັຍໄວ້ດົນນານເພາະເຫັນແກ່ທ່ານທັງຫລາຍ ພຣະອົງບໍ່ຊົງປະສົງທີ່ຈະໃຫ້ຜູ້ນຶ່ງຜູ້ໃດຈິບຫາຍເສັງ ແຕ່ຊົງປາຖນາທີ່ຈະໃຫ້ຄົນທັງປວງມາເຖິງການຖິ້ມໃຈເກົ່າເອົາໃຈໃຫມ່"

ບໍ່ວ່າພີ່ນ້ອງຈະເປັນຄົນດີຫລືຄົນບໍ່ດີປານໃດກໍຕາມ ພະເຈົ້າຮັກພີ່ນ້ອງແລະຢາກຈະມອບຄວາມລອດໃຫ້ພີ່ນ້ອງ. ພະອົງບໍ່ປະສົງໃຫ້ພີ່ນ້ອງຖືກທຳລາຍ

(ໂຣມ 5:8) "ແຕ່ຝ່າຍພຣະເຈົ້າຊົງສະແດງຄວາມຮັກຂອງພຣະອົງແກ່ເຮົາທັງຫລາຍ ຄືຂນະທີ່ພວກເຮົາຍັງເປັນຄົນຜິດບາບຢູ່ນັ້ນ ພຣະຄຣິດໄດ້ຊົງຍອມສິ້ນພຣະຊົນແທນເຮົາທັງຫລາຍ"

ເປັນໄປໄດ້ແນວໃດ ພະເຈົ້າຜູ້ທີ່ເຮົາໄດ້ເຮັດບາບຕໍ່ພະອົງບໍ່ໄດ້ເອົາໂທດເອົາຜິດຫຍັງຕໍ່ເຮົາແຕ່ໃຫ້ອະໄພເຮົາ? ພວກເຮົາທຸກຄົນເປັນຄົນບາບ, ພວກເຮົາບໍ່ເຊື່ອຟັງພະອົງແລະເຮັດຜິດກົດຂອງພະອົງ. ບໍ່ມີລັດຖະບານໃດໃນໂລກທີ່ເພີກເສີຍຕໍ່ການກະທຳທີ່ຜິດກົດໝາຍ. ຜູ້ກະທຳຜິດກົດໝາຍເມື່ອຖືກຈັບໄດ້ແມ່ນຕ້ອງຖືກລົງໂທດ. ການເຮັດຜິດກົດຂອງພະເຈົ້າຍິ່ງແຮ້ງແຮງກວ່າການເຮັດຜິດກົດຂອງກົດໝາຍໂລກອີກ ເພາະວ່າຄວາມບາບແຍກມະນຸດອອກຈາກພະເຈົ້າ. ພະເຈົ້າເປັນຜູ້ສ້າງເຮົາມາ ແລະເປັນພຽງອົງດຽວທີສາມາດຊ່ອຍເຮົາໃຫ້ພົ້ນໄດ້!

ແມ້ວ່າພະເຈົ້າເປັນພະເຈົ້າແຫ່ງຄວາມຮັກນິລັນການ ແຕ່ພະອົງກໍເປັນພະເຈົ້າແຫ່ງຄວາມຍຸດຕິທຳ. ພະອົງໄດ້ອະທິບາຍກ່ຽວກັບພະອົງໃຫ້ໂມເຊວ່າ

(ອົບພະຍົບ 34:6-7) “ພຣະຜູ້ເປັນເຈົ້າ ພຣະຜູ້ເປັນເຈົ້າແມ່ນພຣະເຈົ້າຜູ້ເຕັມປ່ຽມໄປດ້ວຍຄວາມເມດຕາກະຣຸນາ ຜູ້ບໍ່ໂກດງ່າຍ ຜູ້ສະແດງຄວາມຮັກໝັ້ນຄົງ ແລະຄວາມສັດຊື່ ຜູ້ມີຄວາມຮັກໝັ້ນຄົງຫລາຍຊົ່ວອາຍຸພັນຄົນ ຜູ້ໂຜດໃຫ້ອະພັຍຄວາມບໍ່ຍຸດຕິທັມ ຄວາມຊົ່ວຊ້າ ແລະຄວາມບາບ ແຕ່ຈະລົງໂທດລູກຫລານເຫລັນເຖິງສາມສີ່ຊົ່ວອາຍຸຄົນ ຍ້ອນຄວາມບາບທີ່ບິດາມານດາຂອງເຂົາໄດ້ກະທຳ”

ຂໍ້ທີ 7 ໃນພາສາອັງກິດແປຕ່າງພາສາລາວເຮົາໜ້ອຍໜຶ່ງ ໃນຕອນທ້າຍຂອງຂໍ້ນີ້ພາສາອັງກິດຖ້າແປອອກມາເປັນພາສາທ້ອງຕະຫລາດແລ້ວແມ່ນ “ພະອົງບໍ່ປ່ອຍໃຫ້ຄົນຜິດລອຍນວນ” ພະອົງມີທັງຄວາມຮັກແລະຄວາມເມດຕາ, ແລະໃນເວລາດຽວກັນພະອົງກໍມີກົດໝາຍແລະຄວາມຍຸດຕິທຳ. ເບິ່ງຄືວ່າສອງສິ່ງນີ້ມີຄວາມແຕກຕ່າງກັນ ແລ້ວສອງສິ່ງນີ້ເຂົ້າກັນໄດ້ແນວໃດ? ມີທາງອອກແນ່ບໍ່? ມີຄຳຕອບແນ່ບໍ່? ຂອບຄຸນພະເຈົ້າທີ່ຄຳຕອບມີ! ພະເຈົ້າແຫ່ງຄວາມຮັກໄດ້ພົບພົບທາງທີ່ຈະຊ່ອຍເຮົາແລະພະອົງກໍຍັງຄົງຄວາມຍຸດຕິທຳ.

ພະອົງໄດ້ຫາຕົວແທນທີ່ປະເສີດມາຕາຍແທນເຮົາ, ມາຮັບໂທດແຫ່ງຄວາມບາບເພື່ອວ່າພວກເຮົາຈະໄດ້ຊີວິດ. ໂຢຮັນໄດ້ອະທິບາຍຢ່າງນີ້ວ່າ: (ໂຢຮັນ 3:16) “ເພາະວ່າພຣະເຈົ້າຊົງຮັກໂລກຈົນໄດ້ປະທານພຣະບຸດອົງດຽວຂອງພຣະອົງ ເພື່ອທຸກຄົນທີ່ວາງໃຈເຊື່ອໃນພຣະບຸດນັ້ນຈະບໍ່ຈິບຫາຍ ແຕ່ມີຊີວິດອັນຕລອດໄປເປັນນິດ”

ພະເຍຊູໄດ້ລົງມາບັງເກີດເປັນມະນຸດ ພະອົງໄດ້ປະເຊີນກັບບັນຫາແລະການທົດລອງຕ່າງໆຢ່າງມະນຸດໄດ້ພົບແລະຖືກທົດລອງ. ພະອົງເຊື່ອຟັງພະເຈົ້າທຸກຢ່າງເຊິ່ງສະແດງໃຫ້ເຫັນວ່າບໍ່ມີການລະ

ເວັ້ນສຳລັບຄວາມບາບ. ພະຄຣິດໄດ້ເປັນຕົວແທນຂອງມະນຸດ ພະອົງບໍ່ມີບາບ ພະອົງໄດ້ສະໝັກແບກເອົາຄວາມຜິດບາບຂອງທຸກໆຄົນ ແລະຕາຍແທນພວກເຂົາ.

ໂປໂລໄດ້ຂຽນວ່າ (ໂຣມ 5:19) "ດ້ວຍວ່າຄົນຈຳນວນຫລາຍຕົກເປັນຄົນຜິດບາບເພາະມະນຸດຄົນດຽວທີ່ບໍ່ເຊື່ອຟັງສັນໃດ ຄົນຈຳນວນຫລາຍກໍຈະໄດ້ຊົງຖືວ່າເປັນຄົນຊອບທັມ ເພາະພຣະອົງຜູ້ດຽວທີ່ໄດ້ຊົງເຊື່ອຟັງສັນນັ້ນ"

ການສິ້ນພະຊົນຂອງພະເຢຊູບໍ່ແມ່ນເພື່ອເຮັດໃຫ້ຄວາມໂກດຂອງພະເຈົ້າລົດລົງເໝືອນດັ່ງ ມາຕິນລູເທີ (Martin Luther) ໄດ້ຄິດ. ພະເຢຊູໄດ້ຂັນອາສາສິ້ນພະຊົນເພື່ອຊ່ອຍພວກເຮົາທັງຫລາຍຈາກບາບ, ພະເຈົ້າກໍຮັກເຮົາຫລາຍຈົນໄດ້ອະນຸຍາດໃຫ້ພະບຸດອົງດຽວຂອງພະອົງມາເປັນເຄື່ອງບູຊາໄຖ່ບາບຂອງພວກເຮົາ. ພະເຢຊູເປັນລູກແກະຂອງພະເຈົ້າ ເປັນລູກແກະແຫ່ງການຖະຫວາຍບູຊາ!

ຕອນທີ່ພະເຈົ້າໄດ້ນຳປະຊາຊົນອິດສະລາເອນອອກຈາກເອຢິບ ພະອົງໃຫ້ຕົວຢ່າງນ້ອຍໆແກ່ພວກເຂົາເພື່ອໃຫ້ຮູ້ເຖິງແຜນການຊ່ອຍໃຫ້ລອດຂອງພະອົງ. ໃກ້ໆພູເຂົາຊີນາຍນັ້ນໂດຍຜ່ານທາງສັນຍາລັກແລະພິທີກຳຕ່າງໆປະຊາຊົນຂອງພະເຈົ້າໄດ້ເປັນພະຍານເຖິງແຜ່ນການຊ່ອຍໄຖ່ເອົາຄົນບາບຂອງພະເຈົ້າ. ພະເຈົ້າໄດ້ສັ່ງບອກໃຫ້ພວກເຂົາເຮັດພິທີກຳຕ່າງໆໃນຫໍເຕັນສັກສິດ. ຫໍເຕັນສັກສິດນີ້ໄດ້ເປັນສິ່ງບອກມະນຸດມາຕະຫລອດໃຫ້ຮູ້ເຖິງເຫດການທີ່ຈະເກີດຂຶ້ນທີ່ເນີນເຂົາຄາວາຣີ ບ່ອນເຊິ່ງລູກແກະຕົວຈິງຈະຖືກນຳໄປຖະຫວາຍບູຊາສຳລັບຄວາມຜິດບາບຂອງມະນຸດທັງປວງ ເຮັດໃຫ້ພວກເຂົາແນ່ໃຈໄດ້ເຖິງການໃຫ້ອະໄພແລະການໄດ້ຮັບຄວາມລອດ.

ຄົນໃນສະໄໝກ່ອນເມື່ອເຂົາເອົາສັດໄປຖະຫວາຍບູຊາໄຖ່ບາບ, ເຂົາຈະວາງມືໄວ້ທີ່ຫົວຂອງສັດແລະສາລະພາບບາບອອກມາ.

ແລະຫລັງຈາກນັ້ນເຂົາກໍໃຊ້ມີດຂ້າສັດ, ສິ່ງນີ້ເປັນສັນຍາລັກໃຫ້ຮູ້ວ່າ ຄວາມບາບໄດ້ເປັນສາເຫດຂອງການລົງມາຕາຍຂອງຜູ້ໜຶ່ງ ນັ້ນຄືພະເຢຊູຜູ້ເປັນແກະຖະຫວາຍບູຊາ.

ຄວາມບາບບໍ່ແມ່ນຂອງຫລິ້ນ. ຄວາມບາບເປັນສິ່ງໜ້າຢ້ານໜ້າກົວ. ແຕ່ວ່າໄມ້ກາງແຂນທີ່ພູເຂົາຄາວາຣີທີ່ໄດ້ນຳສັນຍາແຫ່ງຊີວິດນິລັນມາສູ່ໃຈຂອງມະນຸດແມ່ນມີພະລັງຫລາຍກວ່າຄວາມບາບ.

ໃນສະໄໝພະຄຳພີເກົ່າປະຊາຊົນຂອງພະເຈົ້າໄດ້ນຳຂອງມາຖະຫວາຍບູຊາເພື່ອສະແດງໃຫ້ເຫັນເຖິງຄວາມເຊື່ອສັດທາໃນການສະເດັດລົງມາຕາຍຂອງບຸດພະເຈົ້າແທນທີ່ມະນຸດ. ພະເຍຊູຄືຂອງຖະຫວາຍບູຊາທີ່ແທ້ຈິງ. ໃນຕອນທີ່ພະເຍຊູມາຫາໂຢຮັນເພື່ອຮັບສິນ, ໂຢຮັນໄດ້ກ່າວວ່າ, (ໂຢຮັນ 1:29) ""ເບິ່ງແມ່, ພຣະເມສານ້ອຍ(ລູກແກະ)ຂອງພຣະເຈົ້າ ຜູ້ຊົງຮັບເອົາຄວາມຜິດບາບຂອງມະນຸສໂລກໄປເສັ຾"

ພະເຍຊູໄດ້ລົງມາຊ່ອຍຄົນທີ່ວາງແຜນຈະຂ້າພະອົງ! ພະອົງໄດ້ຖືກເຂົາຂູ່ນຕີ, ຖືກເຂົາເຍາະເຍີ້ຍ, ແລະຖືກຕັດສິນໃຫ້ຖືກຄຶງທີ່ໄມ້ກາງແຂນ ເຊິ່ງແມ່ນການປະຫານທີ່ໂຫດຮ້າຍທາລຸນທີ່ສຸດທີ່ເຄີຍມີມາ. ໃນສະໄໝນັ້ນມີແຕ່ນັກໂທດອາດສະຊາກອນຮ້າຍແຮງເທົ່ານັ້ນທີ່ຈະຖືກປະຫານແບບນີ້.

ແທນທີ່ບັບຣາບັສຜູ້ຜິດກົດໝາຍແລະເປັນນັກອາດສະຍາກອນຜູ້ແຮ້ງແຮງຈະໄດ້ຮັບໂທດນີ້ ແຕ່ປະຊາຊົນຂອງພະອົງກັບເລືອກທີ່ຈະປ່ອຍໃຫ້ບັບຣາບັສເປັນອິດສະຫລະແລະຕຶງພະເຍຊູແທນ. ພະຄຳພີໄດ້ກ່າວວ່າ,

(1 ເປໂຕ 2:22) "ພຣະອົງບໍ່ໄດ້ຊົງເຮັດບາບຈັກປະການ ແລະຄຳອຸບາຍໃນພຣະໂອດຂອງພຣະອົງກໍຊອກບໍ່ພົບ" ແລະພະອົງກໍໄດ້ຖືກເຂົາຕຶງທີ່ໄມ້ກາງແຂນ. ໃນການຕາຍຂອງພະອົງ ພະອົງແມ່ນຖືກຈັດຢູ່ໃນຈຳພວກຄົນບາບ. ພະອົງໄດ້ຖືກຕຶງຢູ່ກາງໂຈນສອງຄົນ. ແລະໃນຂະນະທີ່ພະເຈົ້າໄດ້ວາງບາບຂອງທັງໂລກໃຫ້ພະອົງແບກໄວ້ ພະອົງໄດ້ຮ້ອງອອກມາວ່າ (ມັດທາຍ 27:46) "ພຣະເຈົ້າຂອງຂ້າພຣະອົງ, ພຣະເຈົ້າຂອງຂ້າພຣະອົງເອີຍ, ເຫດສັນໃດຈິ່ງຊົງປະຖິ້ມຂ້າພຣະອົງເສັ຾" ພະອົງໄດ້ຮູ້ສຶກເຖິງການແບ່ງແຍກອັນເຈັບທີ່ຄວາມບາບໄດ້ນຳເອົາມາ. ພະເຍຊູບໍ່ສາມາດທົນຕໍ່ຄວາມທໍລະມານທີ່ຈາກການຖືກແບກແຍກຈາກພະບິດາ. ສິ່ງນີ້ເຮັດໃຫ້ຈິດໃຈຂອງພະອົງແຕກສະຫລາຍ

(ມາຣະໂກ 15:31) ພວກຜູ້ຄົນໄດ້ຮ້ອງຕະໂກນອອກມາວ່າ "ມັນ(ລາວ)ຊ່ອຍຄົນອື່ນໃຫ້ພົ້ນໄດ້ແຕ່ຊ່ອຍຕົນເອງບໍ່ໄດ້" ນີ້ກໍແມ່ນຄວາມຈິງ, ພະອົງບໍ່ສາມຊ່ອຍພະອົງເອງໄດ້; ພະອົງເປັນພະເຈົ້າພະອົງໄດ້ລົງມາໃນໂລກມາຮັບທຳມະຊາດເປັນມະນຸດ ມາຈ່າຍຄ່າໂທດຂອງຄວາມບໍ່ເຊື່ອຟັງ, ມາຈ່າຍຄ່າໂທດຂອງການຜິດກົດໝາຍ ແລະຈ່າຍຄ່າໂທດຂອງຄວາມບາບ.

ພະເຈົ້າຜູ້ມີຄວາມຮັກຈະພໍພະໄທກໍຕໍ່ເມື່ອມະນຸດໄດ້ຄືນດີກັບຄອບຄົວຂອງພະອົງ. ພະອົງໄດ້ສົ່ງພະບຸດຂອງພະອົງມາຕາຍທີ່ທີ່ຂອງມະນຸດ. ພະເຍຊູໄດ້ທົນແບກເອົາການປະຕິບັດທີ່ໂຫດຮ້າຍທີ່ພວກເຮົາຄວນຈະໄດ້ຮັບ ເພື່ອວ່າພວກເຮົາຈະໄດ້ຮັບການປະຕິບັດອັນດີທີ່ພະອົງຄວນຈະໄດ້ຮັບ. ພະອົງຖືກເຂົາປະນາມເພາະບາບຂອງເຮົາ, ແລະພະອົງຕ້ອງສິ້ນພະຊົນຢ່າງທໍລະມານເພື່ອພວກເຮົາອາດໄດ້ຊີວິດນິລັນ.

ດ້ວຍວິທີນີ້ເອງພະເຈົ້າສາມາດມອບຊີວິດນິລັນໃຫ້ເຮົາແລະອົງກໍຍັງຄົງຄວາມຍຸດຕິທໍາ. ບໍ່ແມ່ນຍ້ອນການດີຕ່າງໆທີ່ພວກເຮົາໄດ້ເຮັດ ແຕ່ແມ່ນຍ້ອນພະອົງສາມາດມອບຄວາມດີຕ່າງໆທີ່ພະເຍຊູໄດ້ກະທໍາໃຫ້ເຮົາ ພະເຍຊູໄດ້ມີຊີວິດທີ່ສົມບູນແບບ. ໂປໂລ ຜູ້ປະກາດແກ່ຄົນຕ່າງຊາດໄດ້ກ່າວວ່າ, (ເອເຟໂຊ 2:8) “ດ້ວຍວ່າຊຶ່ງທ່ານທັງຫລາຍໄດ້ຖືກຊົງໂຜດໃຫ້ພົ້ນນັ້ນ ກໍຍ້ອນພຣະຄຸນດ້ວຍທາງຄວາມເຊື່ອ”

ຄວາມເຊື່ອນັ້ນແມ່ນປັດໃຈສໍາຄັນຂອງຄວາມລອດ.

ໃນຕອນທີ່ອັກຄະສາວົກໂປໂລຖືກຈອງຈໍາທີ່ເມືອງຟີລິບປີ ທະຫານຍາມຫ້ອງຂັງໄດ້ຖາມລາວວ່າລາວຈະຕ້ອງເຮັດຫຍັງເພື່ອທີ່ລາວຈະໄດ້ລອດພົ້ນ. ໂປໂລຕອບລາວວ່າ, (ກິດຈະການ 16:31) “ຈົ່ງເຊື່ອວາງໃຈໃນພຣະເຢຊູເຈົ້າແລ້ວທ່ານຈະໄດ້ພົ້ນ”

ຢ່າງໃດກໍຕາມການຮັບຮູ້ວ່າພະຄຣິດໄດ້ລົງມາໃນໂລກແລະສິ້ນພະຊົນນັ້ນຍັງບໍ່ແມ່ນຄວາມເຊື່ອສັດທາທີ່ຊ່ອຍໄດ້. ຍັງມີຫລາຍກວ່ານັ້ນອີກ. ພະຄໍາພີໄດ້ກ່າວ. (ຢາໂກໂບ 2:19) “...ສ່ວນຜີຮ້າຍກໍເຊື່ອເຫມືອນກັນແລະຢ້ານຈົນຕົວສັ່ນ”

ການເຊື່ອໃນພະເຍຊູນັ້ນມີຄວາມໝາຍຫລາຍກວ່າການເຊື່ອວ່າພະອົງໄດ້ລົງມາຕາຍເມື່ອ 2,000 ປີທີ່ແລ້ວ. ຖ້າພີ່ນ້ອງອ່ານໃນໜັງສືບັນທຶກສິ່ງສຸດຍອດ (Guiness Book of Records) ສະບັບປີ 1990 ໜ້າ 186 ພີ່ນ້ອງຈະເຫັນເລື່ອງລາວຄວາມເຊື່ອແລະຄວາມສັດທາອັນມະຫັດສະຈັນ. “ນັກໄຕ່ເຊືອກທີ່ເກັ່ງທີ່ສຸດແຫ່ງສັດຕະວັດທີ 19 ຊື່ວ່າ ຟຣານຊິດສ໌ ເກຣບລິດທ໌ ເຊິ່ງມີສາຍາວ່າ ຊາຣ໌ ແບລນດິນ (Charles Blandin) (1824-1897) ລາວເປັນຄົນປະເທດຝະຣັ່ງ. ລາວເປັນຄົນທໍາອິດທີ່ໄຕ່ເຊືອກຂ້າມນໍ້າຕົກໄນອັກຣາ ດ້ວຍເຊືອກໜາ 3 ນີ້ວ ຍາວ 1,100 ຟຸດ (335 ແມັດ) ແລະສູງກວ່າໜ້ານໍ້າ 160 ຟຸດ (49 ແມັດ) ໃນວັນທີ 30 ເດືອນ 6 ປີ 1859” ຫລັງຈາກທີ່ ຊາຣ໌ ແບລນດິນ ໄດ້ໄຕ່ເຊືອກຂ້າມນໍ້າຕົກໄນອັກຣາແລ້ວ, ມີຊາຍໜຸ່ມຄົນໜຶ່ງຢ່າງອອກມາ

ຈາກຝູງທ່ານຜູ້ຊົມແລ້ວຖາມລາວວ່າ "ທ່ານ ຊາຣ໌ ແບລນດິນ ເປັນຫຍັງທ່ານຄືບໍ່ເອົາໃຜຄົນໃດຄົນໜຶ່ງເຈ່ຍໃສ່ຫລັງແລ້ວພາຍ່າງຂ້າມນ້ຳຕົກນຳ? ພໍຍ່າງໄປຮອດທາງກາງທ່ານໄດ້ນັ່ງຕັ່ງກິນອາຫານທ່ຽງຢູ່ຫັ້ນ ທ່ານຄືບໍ່ລອງເຈ່ຍຄົນໃດຄົນໜຶ່ງຍ່າງນ້ຳຕົກນຳ?" ຊາຣ໌ ແບລນດິນ ຕອບວ່າ "ໜຸ່ມເອີ້ຍ ເຈົ້າເຊື່ອວ່າຂ້ອຍສາມາດເຮັດຢ່າງທີ່ເຈົ້າເວົ້າມາໄດ້ບໍ່?" ຊາຍໜຸ່ມຄົນນັ້ນກໍຕອບວ່າ "ຂ້າພະ-ເຈົ້າແນ່ໃຈວ່າ ທ່ານສາມາດເຮັດໄດ້." ແລ້ວ ຊາຣ໌ ແບລນດິນ ກໍເວົ້າວ່າ "ມານີ້ ໃຫ້ເຈົ້າມາລອງໄປກັບຂ້ອຍ." ແລ້ວໃນທັນໃດນັ້ນຊາຍໜຸ່ມຄົນນີ້ກໍຍ່າງໜີ! ຊາຍໜຸ່ມຄົນນີ້ບອກວ່າລາວເຊື່ອ ແຕ່ວ່າຄວາມເຊື່ອຂອງລາວນັ້ນເປັນພຽງແຕ່ຄຳເວົ້າ ໜຶ່ງປີຕໍ່ມາ ຄືໃນວັນທີ 30 ເດືອນ 6 ປີ 1860 ໄດ້ມີລາຍງານອອກມາວ່າ ຊາຣ໌ ແບລນດິນ ໄດ້ກັບໄປທີ່ນ້ຳຕົກໄນອັກຣາແລະຍ່າງໄຕ່ເຊືອຂ້າມນ້ຳຕົກໄນອັກຣາອີກເທື່ອໜຶ່ງ ເທື່ອນີ້ລາວໄດ້ເອົາຜູ້ຕິດຕາມໄປຄົນໜຶ່ງເຈ່ຍໃສ່ຫລັງໄປນຳຄື ແຮຣີ ຄໍລຄອດ (Harry Colcord).

ມີຫຍັງແນ່ບໍ່ທີ່ແຕກຕ່າງ? ເປັນຫຍັງ ແຮຣີ ຄໍລຄອດຄືຍອມເຮັດ? ແຮຣີ ຄໍລຄອດບໍ່ພຽງແຕ່ເຊື່ອໃນ ຊາຣ໌ ແບລນດິນ ເທົ່ານັ້ນແຕ່ລາວຍັງໝັ້ນໃຈໃນ ຊາຣ໌ ແບລນດິນ ນຳ
ນີ້ຄືຄວາມຊື່ສັດທາທີ່ແທ້ຈິງ. ນີ້ຄືຄວາມເຊື່ອຄວາມໄວ້ວາງໃຈທີ່ແທ້ຈິງ.

ພະຄຳພີໄດ້ກ່າວວ່າ, (ສຸພາສິດ 3:5-6) "ຈົ່ງໄວ້ວາງໃຈໃນພຣະຜູ້ເປັນເຈົ້າໃຫ້ສຸດຈິດສຸດໃຈຂອງເຈົ້າ ຢ່າເຊື່ອໝັ້ນໃນຄວາມຮູ້ຂອງຕົນ ເວລາທຳທຸກສິ່ງໃຫ້ລະນຶກເຖິງພຣະຜູ້ເປັນເຈົ້າ ແລ້ວພຣະອົງຈະຊົງສະແດງໃຫ້ເຫັນທາງອັນຖືກຕ້ອງ" ພີ່ນ້ອງໄວ້ວາງໃຈໃນພະເຈົ້າບໍ່? ພີ່ນ້ອງໄວ້ວາງໃຈໃນພະອົງແທ້ບໍ່? ພີ່ນ້ອງຍອມໃຫ້ພະອົງເຂົ້າມາຄອບຄອງຊີວິດຂອງພີ່ນ້ອງບໍ່?

ຄວາມເຊື່ອສັດທາທີ່ນຳໄປເຖິງຄວາມລອດຄືການໄວ້ວາງໃຈໃນຂອງຖະຫວາຍບູຊາແຫ່ງພະຄຣິດວ່າເປັນຄ່າໄຖ່ໂທດຂອງຄວາມຜິດບາບທັງມວນທີ່ພວກເຮົາໄດ້ກະທຳ. ຄວາມເຊື່ອສັດທາທີ່ນຳໄປເຖິງຄວາມລອດນັ້ນຄືການເຊື່ອວ່າບໍ່ມີການກະທຳອັນໃດຂອງພວກເຮົາສາມາດຊ່ອຍເຮົາເອງໄດ້ ແລະເຊື່ອວ່າການຕາຍທີ່ຄາວາຣີຂອງພະຄຣິດສາມາດຊ່ອຍເຮົາໄດ້. ບໍ່ມີມະນຸດຄົນໃດສາມາດອວດອ້າງໄດ້ວ່າພວກເຂົາສາມາດຊ່ອຍໂຕເອງໄດ້.

ລັດສະໝີພາບແມ່ນເປັນຂອງພະເຈົ້າ! ສິ່ງຕ່າງໆທີ່ພະເຈົ້າໄດ້ປະທານໃຫ້ເຮົາແມ່ນດ້ວຍພະຄຸນ ແລະສິ່ງທີ່ເຮົາຕ້ອງເຮັດກໍຄືຕ້ອງມີຄວາມເຊື່ອສັດທາ ໄວ້ວາງໃຈໃນພະອົງໝົດຈິດໝົດໃຈ ແລະຍອມໃຫ້ພະອົງເຂົ້າມາຄວບຄຸມຊີວິດ. ຫລາຍຄົນມີຄວາມສຸກກັບການທີ່ຍອມຮັບເອົາພະຄຣິດມາເປັນພະຜູ້ຊ່ອຍໃຫ້ລອດຂອງເຂົາ ແຕ່ພວກເຂົາບໍ່ຍອມໃຫ້ພະອົງເປັນພະເຈົ້າຂອງເຂົາ.

ນີ້ຄືຄວາມແຕກຕ່າງ. ເມື່ອພວກເຮົາຮັບເອົາພະອົງໃຫ້ເປັນພະເຈົ້າຂອງເຮົາ ກໍໝາຍຄວາມວ່າພວກເຮົາມອບຊີວິດ, ມອບທຸກສິ່ງໃນຢ່າງໃຫ້ພະອົງຄອບຄອງ, ພວກເຮົາພ້ອມທີ່ຈະເຮັດສິ່ງທຸກຢ່າງທີ່ພະອົງຕັດບອກ, ພວກເຮົາໃຫ້ພະອົງເປັນໜຶ່ງໃນຊີວິດແລະແຜນຂອງເຮົາ, ພວກເຮົາບໍ່ສາມາດໄດ້ຮັບຄວາມລອດໂດຍການກະທຳຂອງເຮົາເອງ, ພວກເຮົາຕ້ອງສະແດງໃຫ້ເຫັນວ່າຄວາມເຊື່ອສັດທາຂອງເຮົາແມ່ນເຊື່ອໝົດຈິດໝົດໃຈ.

ການທີ່ຈະໄດ້ຮັບຄວາມລອດນັ້ນແມ່ນສິ່ງທີ່ງ່າຍດາຍ ແຕ່ວ່າຫລາຍຄົນຄິດວ່າການໄດ້ຮັບຄວາມລອດນັ້ນແມ່ນສັບສົນຫລາຍ. ບາງຄັ້ງມັນກໍເປັນການຍາກສຳລັບພວກເຮົາທີ່ຈະຮັບເອົາບາງສິ່ງບາງຢ່າງທີ່ພວກເຮົາໄດ້ຊື້ຫລືເຮັດໃຫ້ເພື່ອແລກເອົາມາ. ຖ້າເພື່ອນຂອງພີ່ນ້ອງໃຫ້ຂອງຂວັນວັນເກີດແກ່ພີ່ນ້ອງ ພີ່ນ້ອງຈະຈ່າຍເງິນໃຫ້ເພື່ອນຄົນນັ້ນບໍ? ແນ່ນອນ ບໍ່! ພີ່ນ້ອງຄົງຈະຮັບຂອງຂວັນນັ້ນມາດ້ວຍຄວາມດີໃຈ!

ພະເຍຊູໄດ້ສະເໜີມອບຄວາມຊອບທຳແລະຄວາມລອດຂອງພະອົງມາໃຫ້ເຮົາໃຫ້ເປັນຂອງຂວັນແຫ່ງຄວາມຮັກແກ່ເຮົາ. ເຖິງແມ້ວ່າພີ່ນ້ອງຢາກຈະຊື້ ພີ່ນ້ອງກໍບໍ່ສາມາດຊື້ໄດ້ ແຕ່ວ່າພີ່ນ້ອງສາ-ມາດຍື່ນມືອອກໄປຮັບເອົາດ້ວຍຄວາມສັດທາແລະຄວາມຍິນດີ. ຢາກໃຫ້ພີ່ນ້ອງຄຸກເຂົ່າແລະອະ-ທິຖານນຳກັນ

“ຂ້າແດ່ພະເຈົ້າ, ຂ້າພະອົງຮູ້ວ່າຂ້າພະອົງເປັນຄົນບາບແລະຂ້າພະອົງຕ້ອງການຄວາມຊ່ອຍເຫລືອ. ຂ້າພະອົງຮູ້ວ່າພະເຍຊູໄດ້ມາຕາຍແທນຂ້າພະອົງ ຂ້າພະອົງຄວນຈະໄດ້ຮັບຄວາມຕາຍນັ້ນ ແຕ່ພະອົງໄດ້ມາຮັບຄວາມຕາຍນັ້ນແທນຂ້າພະອົງ. ຂ້າພະອົງປາດຖະໜາທີ່ຈະຮັບເອົາພະເຍຊູໃຫ້ເປັນພະຜູ້ຊ່ອຍໃຫ້ລອດແລະພະເຈົ້າຂອງຂ້າພະອົງ. ຂ້າພະອົງເສຍໃຈໃນຄວາມຜິດບາບຕ່າງໆທີ່ຂ້າພະອົງໄດ້ກະທຳ. ຂໍໃຫ້ພະອົງອະໄພຄວາມຜິດບາບຕ່າງໆຂອງຂ້າພະອົງແລະເຂົ້າຄອບຄອງຊີວິດຂອງຂ້າພະອົງ. ຂ້າພະອົງປາດຖະໜາໃຫ້ພະເຍຊູເຂົ້າມາສະຖິດໃນໃຈຂອງຂ້າພະອົງແລະຊ່ອຍໃຫ້ຂ້າພະອົງມີຊີວິດເພື່ອພະອົງ. ຂອບຄຸນພະອົງທີ່ຮັບຟັງແລະຕອບຄຳອະທິຖານຂອງຂ້າພະອົງ. ອະທິຖານໃນນາມພະເຍຊູ, ອາແມນ.”

ເມື່ອພີ່ນ້ອງອະທິຖານດ້ວຍຄວາມເຊື່ອສັດທາ, ໃນເວລານັ້ນພະເຈົ້າໄດ້ມອບຂອງປະທານແຫ່ງຊີວິດນິລັນແກ່ພີ່ນ້ອງ

(1 ໂຢຮັນ 5:11-13) "ນີ້ແຫລະ, ເປັນພຍານຫລັກຖານນັ້ນ ຄືວ່າພຣະເຈົ້າໄດ້ຊົງໂຜດປະທານຊີວິດອັນຕລອດໄປເປັນນິດໃຫ້ເຮົາທັງຫລາຍ ແລະຊີວິດນີ້ມີຢູ່ໃນພຣະບຸດຂອງພຣະອົງ ຜູ້ທີ່ມີພຣະບຸດກໍມີຊີວິດ ຜູ້ທີ່ບໍ່ມີພຣະບຸດຂອງພຣະເຈົ້າກໍບໍ່ມີຊີວິດ ຂໍ້ຄວາມເຫລົ່ານີ້ ເຮົາຂຽນມາເຖິງເຈົ້າທັງຫລາຍທີ່ເຊື່ອໃນພຣະນາມພຣະບຸດຂອງພຣະເຈົ້າ ເພື່ອເຈົ້າທັງຫລາຍຈະໄດ້ຮູ້ວ່າພວກເຈົ້າມີຊີວິດອັນຕລອດໄປເປັນນິດ"

ຊີວິດນິລັນບໍ່ແມ່ນສິ່ງທີ່ພວກເຮົາມີໃນໂຕຂອງພວກເຮົາເອງ. ຊີວິດນິລັນແມ່ນມີໃນພະເຍຊູ; ຖ້າພວກເຮົາມີພະເຍຊູ ພວກເຮົາກໍມີຊີວິດນິລັນ. ພະເຍຊູໄດ້ຮ້ອງເຊີນທຸກຄົນໃນທຸກບ່ອນທຸກທີ່ເພື່ອວ່າ

(ໂຢຮັນ 3:16) "ທຸກຄົນທີ່ວາງໃຈເຊື່ອໃນພຣະບຸດ(ພະອົງ)ນັ້ນຈະບໍ່ຈິບຫາຍ ແຕ່ມີຊີວິດອັນຕລອດໄປເປັນນິດ"

ບາງທີພີ່ນ້ອງອາດຄິດວ່າພີ່ນ້ອງເປັນຄົນບາບທີ່ບໍ່ມີຫວັງຫຍັງ, ອັນນີ້ບໍ່ແມ່ນຄວາມຈິງ! ພະເຈົ້າສາມາດປ່ຽນເຫດການທີ່ເປັນໄປບໍ່ໄດ້ໃຫ້ເປັນໄຊຊະນະ. ບໍ່ມີຊີວິດໃດທີ່ຊົ່ວຊ້າເກີນໄປ, ບໍ່ມີບາບໃດທີ່ໜາເກີນກວ່າການໃຫ້ອະໄພຂອງພະຄຣິດ! ພະເຍຊູໄດ້ຖືກຕຶງທີ່ໄມ້ກາງແຂນລະຫວ່າງກາງຄົນບາບສອງຄົນ ແລະສອງຄົນນີ້ກໍເປັນອາດຊະຍາກອນ. ໃນຕອນທຳອິດພວກເຂົາເຍາະເຍີ້ຍພະອົງ. ພາຍຫລັງມາ. ໜຶ່ງໃນສອງຄົນນັ້ນຜູ້ເຊິ່ງໄດ້ຍິນຄຳສອນຂອງພະເຍຊູແລະເຫັນການຮັກສາຄົນປ່ວຍຂອງພະອົງໄດ້ເຫັນເຖິງຄວາມຮັກຂອງພະອົງ. ລາວເບິ່ງເຫັນມືແລະເທົ້າຂອງພະອົງຖືກຕະປູຕອກຕິດກັບໄມ້ກາງແຂນໂດຍທີ່ບໍ່ໄດ້ຈົ່ມຫຍັງ. ລາວໄດ້ຍິນຄຳອະທິຖານຂອງພະເຍຊູອອກມາຈາກສົບແຫ່ງຄວາມເຈັບປວດວ່າ

(ລູກາ 23:34) "ໂອ ພຣະບິດາເຈົ້າ, ຂໍໂຜດອະພັຍໂທດເຂົາ ເພາະວ່າເຂົາບໍ່ຮູ້ຈັກວ່າເຂົາກຳລັງເຮັດອັນໃດ"

ຄວາມຮູ້ສຶກທີ່ບໍ່ເຄີຍຮູ້ສຶກມາກ່ອນໄດ້ເກີດຂຶ້ນກັບຈິດໃຈຂອງໂຈນຄົນນັ້ນ. ລາວບໍ່ເຄີຍເຫັນຄວາມໃດຍິ່ງໃຫຍ່ເຊັ່ນນີ້ມາກ່ອນ.

(ລູກາ 23:39) ຝ່າຍຄົນນຶ່ງໃນຜູ້ຮ້າຍທີ່ຖືກຄຶງໄວ້ ໄດ້ເວົ້າຫມິ່ນປມາດຕໍ່ພຣະອົງວ່າ, "ເຈົ້າເປັນພຣະຄຣິດ ບໍ່ແມ່ນຫລື ຈົ່ງຊ່ອຍຕົວເອງກັບຊ່ອຍເຮົາໃຫ້ພົ້ນເສັຽ"

ພະເຍຊູໄດ້ສາຍແສງສະຫວ່າງແຫ່ງຊີວິດໃຫ້ໂຈນຜູ້ທຳອິດເຫັນ. ໂຈນຜູ້ທຳອິດຮູ້ໂຕວ່າລາວເປັນຄົນບາບ, ລາວໝົດຫວັງ ແລະລາວກໍຫັນໄປຕິຕຽນໂຈນອີກຄົນໜຶ່ງສຳລັບຄຳມິ່ນປະໝາດທີ່ລາວເວົ້າໃຫ້ພະເຍຊູ. ຫລັງຈາກນັ້ນລາວກໍຫັນມາທີ່ພະເຍຊູ. ພະເຍຊູເບິ່ງບໍ່ຄືຄົນທີ່ສາມາດຊ່ອຍລາວໄດ້ເລີຍ. ແຕ່ວ່າເຖິງແມ້ວ່າຈະເຈັບປວດຫລາຍປານໃດ ພະອົງກໍຍັງມີຄວາມສະງ່າລາສີ ແລ້ວໂຈນຜູ້ນັ້ນໄດ້ກ່າວອອກມາວ່າຜູ້ນີ້ຄືລູກແກະຂອງພະເຈົ້າທີ່ທຳນາຍໄວ້ໃນຄຳພະຍາກອນ. ໂຈນຜູ້ນີ້ໄດ້ກັບໃຈແລະກ່າວຄຳສຳນຶກຜິດອອກມາຈາກສ່ວນເລິກໃນໃຈຂອງລາວ.

(ລູກາ 23:42) ແລ້ວລາວກ່າວອອກມາວ່າ, “ພຣະເຢຊູເອີຍ, ເມື່ອໃດທ່ານມາໃນແຜ່ນດິນຂອງທ່ານ ຂໍຈົ່ງລະນຶກເຖິງຂ້ານ້ອຍແດ່”

ໃນທັນໃດນັ້ນພະເຍຊູຊົງຕອບວ່າ: (ລູກາ 23:43) “ເຮົາບອກທ່ານຕາມຈິງວ່າ ວັນນີ້ທ່ານຈະຢູ່ກັບເຮົາໃນທີ່ສຸຂເສີມ”

ນີ້ຊ່າງເປັນພະສັນຍາທີ່ຍິ່ງໃຫຍ່ແທ້! ຢາກໃຫ້ພີ່ນ້ອງທຸກຄົນເບິ່ງໄປທີ່ອະນາຄົດຕອນທີ່ທຸກຄົນທີ່ຮັກພະເຈົ້າຈະໄດ້ໄປລວມໂຕກັນໃນອານາຈັກຂອງພະອົງດ ພະເຍຊູໄດ້ຊົງສັນຍາວ່າຈະຈຳໂຈນທີ່ກັບໃຈທີ່ເຂົ້າຫາພະອົງດ້ວຍຄວາມເຊື່ອສັດທາ. ດ້ວຍການເຂົ້າຫາພະອົງດ້ວຍຄວາມເຊື່ອສັດທານີ້ເຮັດໃຫ້ໂຈນຄົນນັ້ນໄດ້ຮັບຄວາມລອດ. ໃຫ້ເຮົາມາເບິ່ງຄືນນຳກັນແບບຫຍໍ້ເຖິງຂ່າວດີທີ່ໂຈນຜູ້ກຳລັງຈະຕາຍໄດ້ຄົ້ນພົບ ແລະສິ່ງທີ່ ແຮຣີ ອໍຄາດໄດ້ຄົ້ນພົບ.

ຊີວິດນິລັນພະເຈົ້າປະທານໃຫ້ຟຣີ (ໂຣມ 6:23; 5:17,18)
ຄ່າຈ້າງຂອງຄວາມບາບຄືຄວາມຕາຍ (ໂຣມ 6:23)
ພວກເຮົາບໍ່ສາມາດຊ່ອຍໂຕເຮົາເອງໃຫ້ພົ້ນໄດ້ (ເຢເຣມີຢາ 13:23; ໂຢຮັນ 15:5)
ພະເຈົ້າຮັກເຮົາພະອົງບໍ່ປະສົງໃຫ້ໃຜຈັກຄົນຕ້ອງຕາຍ (2 ເປໂຕ 3:9)
ແຕ່ພະເຈົ້າກໍບໍ່ສາມາດເພີກເສີຍຕໍ່ບາບແລະປ່ຽນພະບັນຍັດຂອງພະອົງ (ອົບພະຍົບ 34:5-7)
ແຜນການຊ່ອຍເຮົາໃຫ້ລອດຂອງພະເຈົ້າແມ່ນຂອງປະທານແຫ່ງບຸດຂອງພະອົງ (ໂຢຮັນ 3:16)
ຖ້າເຮົາຮັບເອົາພະເຍຊູໃຫ້ເປັນພະຜູ້ຊ່ອຍໃຫ້ລອດແລະເປັນພະເຈົ້າດ້ວຍຄວາມເຊື່ອສັດທາ, ກັບໃຈແລະສາລະພາບບາບຂອງເຮົາອອກມາ ພວກເຮົາກໍຈະສາມາດໄດ້ຮັບຊີວິດນິລັນ! (1 ໂຢຮັນ 1:9; 1 ໂຢຮັນ 5:13; ກິດຈະການ 16:30,31)

(ໂຢຮັນ 10:27-28) ພະເຍຊູໄດ້ກ່າວວ່າ “ແກະຂອງເຮົາກໍຟັງສຽງຂອງເຮົາ ແລະເຮົາກໍຮູ້ຈັກຝູງແກະນັ້ນແລະເຂົາຕາມເຮົາໄປ ຝ່າຍເຮົາກໍປະທານຊີວິດອັນຕລອດໄປເປັນນິດໃຫ້ແກ່ແກະນັ້ນ ແລະເຂົາຈະບໍ່ຈິບຫາຍຈັກເທື່ອ ບໍ່ມີຜູ້ໃດຈະຍາດເຂົາອອກຈາກມືຂອງເຮົາໄດ້” ໂຢຮັນ 10:27-28 ໃນເວລານີ້ກໍເຊັ່ນດຽວກັນ ພະເຍຊູຄອຍຖ້າທີ່ຈະມອບຄວາມແນ່ໃຈນີ້ໃຫ້ແກ່ພີ່ນ້ອງ.

ໃນໜັງສືເຫລັ້ມສຸດທ້າຍຂອງພະຄໍາພີ, ພະເຍຊູໄດ້ກ່າວໃຫ້ພວກເຮົາເຫັນເຖິງພາບທີ່ພະອົງກໍາລັງເຄາະທີ່ປະຕູໃຈ ພະອົງຄອຍຖ້າເຮົາທີ່ຈະເຊີນພະອົງເຂົ້າໄປຂ້າງໃນ ພະອົງກໍາລັງລໍຟັງຄໍາຮຽກເຊີນຂອງພະນ້ອງໃຫ້ພະອົງເຂົ້າໄປຂ້າງໃນ. ຢາກຂໍເຊີນຊວນໃຫ້ພີ່ນ້ອງເປີດປະຕູໃຈແລະເຊີນເອົາພະອົງເຂົ້າມາໃນຈິດໃຈຂອງພີ່ນ້ອງແລະເປັນພະຜູ້ຊ່ອຍໃຫ້ລອດແລະເປັນພະເຈົ້າແຫ່ງຊີວິດຂອງພີ່ນ້ອງ. ພະອົງກໍາລັງຄອງຄອຍ ພະອົງກໍາລັງລໍຟັງ

(ເຊີນຊວນ)

ມີສິ່ງໜຶ່ງທີ່ພະເຍຊູບໍ່ສາມາດເຮັດ ນັ້ນຄືການບັງຄັບໃຫ້ພີ່ນ້ອງເປີດປະຕູໃຈຕ້ອນຮັບພະອົງ.

ພະອົງມອບອິດສະຫລະໃນການເລືອກໃຫ້ເຮົາທຸກຄົນ

ພວກເຮົາຄວນເປັນຝ່າຍເປີດປະຕູໃຈ

ພີ່ນ້ອງທີ່ຮັກ ພີ່ນ້ອງຈະເປີດປະຕູໃຈຂອງພີ່ນ້ອງບໍ?

ພະນ້ອງຈະເຊີນພະເຍຊູເຂົ້າມາໃນຊີວິດຂອງພີ່ນ້ອງນັບຕັ້ງແຕ່ວິນາທີນີ້ບໍ?

ຢ່າປ່ອຍໃຫ້ເວລາເສຍໄປ.

ໃຫ້ພະເຍຊູເຂົ້າມາໃນແລະທໍາຄວາມສະອາດຫົວໃຈຂອງພີ່ນ້ອງ ແລະປະທານຄວາມຊ່ອຍເຫລືອໃນຊີວິດແກ່ພີ່ນ້ອງ. ພະອົງກໍາລັງລໍຄອຍຄໍາຕອບຂອງພີ່ນ້ອງ!